ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 90 /ນຍ
ນະຄອນຫຼວງວຽງຈັນ, ວັນທີ 20 / 04 / 26

# ດຳລັດ
# ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
# ຂອງກະຊວງສຶກສາທິການ ແລະ ກິລາ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ໜັງສືແຈ້ງການຂອງ ຄະນະຈັດຕັ້ງສູນກາງພັກ ກ່ຽວກັບທິດທາງການປັບປຸງກົງຈັກການຈັດຕັ້ງ ຂອງຂະແໜງການສຶກສາທິການ ແລະ ກິລາ ສະບັບເລກທີ 2483/ຄຈສພ, ລົງວັນທີ 26 ທັນວາ 2025;
- ອີງຕາມ ໜັງສືສະເໜີ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 180/ສສກ, ລົງວັນທີ 02 ມີນາ 2026;
- ອີງຕາມ ໜັງສືສະເໜີ ຂອງຄະນະຈັດຕັ້ງສູນກາງພັກ ສະບັບເລກທີ 472/ຄຈສພ, ລົງວັນທີ 25 ມີນາ 2026.

## ນາຍົກລັດຖະມົນຕີ ອອກດຳລັດ:
## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງ ກະຊວງສຶກສາທິການ ແລະ ກິລາ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດ ໃນການຄຸ້ມຄອງ ແລະ ພັດທະນາວຽກງານ ການສຶກສາ, ວິທະຍາສາດ ແລະ ກິລາ.

### ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ

ກະຊວງສຶກສາທິການ ແລະ ກິລາ ຂຽນເປັນຕົວອັກສອນຫຍໍ້ວ່າ “ສສກ” ແມ່ນກົງຈັກການຈັດຕັ້ງໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ແລະ ຄຸ້ມຄອງມະຫາພາກກ່ຽວກັບ ວຽກງານການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ວຽກງານກິລາ-ກາຍຍະກຳ ໃນຂອບເຂດທົ່ວປະເທດ, ເປັນໃຈກາງໃນການພັດທະນາຊັບພະຍາກອນມະນຸດ ຕາມສາມລັກສະນະ ແລະ ຫ້າຫຼັກມູນ ຂອງການສຶກສາ ແຫ່ງຊາດ ແນໃສ່ຕອບສະໜອງຄວາມຕ້ອງການໃນການພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ ແລະ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

**ກະຊວງສຶກສາທິການ ແລະ ກິລາ ມີໜ້າທີ່ ດັ່ງນີ້:**

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ ແລະ ມະຕິ ຂອງລັດຖະບານ;

2. ຄົ້ນຄວ້າ ແລະ ຫັນເອົາແນວທາງນະໂຍບາຍຂອງພັກ, ຍຸດທະສາດ, ແຜນການ ແລະ ມະຕິຕົກລົງ ຂອງລັດຖະບານ ກ່ຽວກັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ມາເປັນແຜນຍຸດທະສາດ, ແຜນການ, ແຜນງານ, ແຜນເງິນ ແລະ ໂຄງການລະອຽດ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ພ້ອມທັງຮັບຜິດຊອບໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ ແລະ ປະກົດຜົນເປັນຈິງ;

3. ຄົ້ນຄວ້າ ສ້າງ, ປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ;

4. ພັດທະນາ ຂອບວຸດທິການສຶກສາແຫ່ງຊາດ ແລະ ມາດຕະຖານຄຸນນະພາບການສຶກສາທຸກຊັ້ນ ແລະ ທຸກສາຍ ໃຫ້ເທົ່າທຽມກັບມາດຕະຖານ ຂອງພາກພື້ນ ແລະ ສາກົນ;

5. ໂຄສະນາ, ເຜີຍແຜ່ນະໂຍບາຍ, ກົດໝາຍ, ນິຕິກຳລຸ່ມກົດໝາຍ, ແຜນຍຸດທະສາດ, ແຜນການ, ແຜນງານ ແລະ ໂຄງການພັດທະນາການສຶກສາ, ວິທະຍາສາດ ແລະ ກິລາ;

6. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການສຶກສາກ່ອນໄວຮຽນ ເພື່ອໃຫ້ເດັກໄດ້ຮັບການເບິ່ງແຍງດູແລທາງດ້ານສຸຂະພາບ ແລະ ໂພຊະນາການ ໃຫ້ມີການຂະຫຍາຍຕົວ ແລະ ພັດທະນາການ ທາງດ້ານຮ່າງກາຍ, ສະຕິປັນຍາ, ອາລົມຈິດ, ພາສາ ແລະ ຮຽນຮູ້ຊີວິດສັງຄົມ ເພື່ອກຽມຄວາມພ້ອມເຂົ້າຮຽນໃນຊັ້ນປະຖົມສຶກສາ;

7. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການສຶກສາສາຍສາມັນ ເພື່ອພັດທະນາຜູ້ຮຽນ ໃຫ້ມີການຂະຫຍາຍຕົວຮອບດ້ານ ທາງດ້ານຮ່າງກາຍ, ຈິດໃຈ ແລະ ສະຕິປັນຍາ, ມີພື້ນຖານການຮຽນຮູ້, ມີຄວາມຮູ້ພື້ນຖານທາງດ້ານວິທະຍາສາດທຳມະຊາດ-ສັງຄົມ ແລະ ວິຊາຊີບ ຂັ້ນພື້ນຖານ;

8. ຊີ້ນຳ, ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງວຽກງານ ການລຶບລ້າງຄວາມບໍ່ຮູ້ໜັງສື, ການບຳລຸງຍົກລະດັບ ແລະ ຝຶກອົບຮົມວິຊາຊີບຂັ້ນພື້ນຖານ ໃຫ້ແກ່ກຸ່ມເປົ້າໝາຍ ຂອງການສຶກສານອກໂຮງຮຽນ ພ້ອມທັງສົ່ງເສີມການຮຽນຮູ້ຕະຫຼອດຊີວິດ;

9. ຊີ້ນຳ, ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ວຽກງານອາຊີວະສຶກສາ ເພື່ອສ້າງ ແລະ ພັດທະນາຜູ້ຮຽນໃຫ້ມີວິຊາຊີບ, ວິຊາສະເພາະ ແລະ ເປັນນັກວິຊາການ ທີ່ມີຄຸນນະພາບ;

10. ຊີ້ນຳ, ຊຸກຍູ້, ສົ່ງເສີມ ແລະ ຄຸ້ມຄອງ ວຽກງານການສຶກສາຊັ້ນສູງ ເພື່ອຄຸ້ມຄອງການຮຽນ-ການສອນ, ການທົດລອງ, ການຄົ້ນຄວ້າວິທະຍາສາດ, ການບໍລິການວິຊາການ, ການພັດທະນາເຕັກໂນໂລຊີ, ນະວັດຕະກຳ ແລະ ຊັບສິນທາງປັນຍາ, ການກໍ່ສ້າງນັກວິຊາການ, ນັກຊ່ຽວຊານລະດັບສູງ, ນັກຄົ້ນຄວ້າ ແລະ ນັກວິທະຍາສາດໃຫ້ພຽງພໍ ຕາມຄວາມຕ້ອງການໃນແຕ່ລະໄລຍະ;

11. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ວຽກງານພະລະ ແລະ ສິລະປະສຶກສາ ໃນໂຮງຮຽນ ແລະ ກິລາ-ກາຍະກຳມວນຊົນ ໃຫ້ທົ່ວປວງຊົນ ມີຄວາມສົນໃຈໃນການຝຶກແອບ ແລະ ອອກກຳລັງກາຍ ໂດຍຕິດພັນກັບການດຳລົງຊີວິດ, ສ້າງຄວາມສາມັກຄີ ແລະ ຄວາມມ່ວນຊື່ນ ເພື່ອເສີມສ້າງສຸຂະພາບ ທາງດ້ານຮ່າງກາຍ ແລະ ຈິດໃຈ ໃຫ້ແຂງແຮງ;

12. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ວຽກງານກິລາ-ກາຍຍະກຳລະດັບສູງ ໃນການສ້າງ ແລະ ພັດທະນານັກກິລາອາຊີບ ເພື່ອເຂົ້າຮ່ວມແຂ່ງຂັນ ໃນພາກພື້ນ ແລະ ສາກົນ;

13. ຄຸ້ມຄອງບັນດາ ມະຫາວິທະຍາໄລ, ສະຖາບັນ, ວິທະຍາໄລ, ສູນ, ໂຮງຮຽນ ແລະ ສະໜາມກິລາ ຕາມລະບຽບການ;

14. ຊຸກຍູ້, ສົ່ງເສີມ, ປະສານງານ, ຕິດຕາມ ແລະ ປະເມີນຜົນ ວຽກງານກໍ່ສ້າງ, ພັດທະນາຄູ, ພັດທະນາຜູ້ບໍລິຫານການສຶກສາ ແລະ ບຸກຄະລາກອນ ຂອງຂະແໜງການສຶກສາທິການ ແລະ ກິລາ ແລະ ການພັດທະນາຊັບພະຍາກອນມະນຸດ ຂອງບັນດາຂະແໜງການ ໃຫ້ໄປຕາມແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

15. ຊີ້ນຳ, ຊຸກຍູ້ ແລະ ສົ່ງເສີມ ການຄົ້ນຄວ້າ ແລະ ປັບປຸງ ຫຼັກສູດການບຳລຸງຄູ, ການສຶກສານິເທດ ແລະ ການພັດທະນາວິຊາຊີບຄູແບບຕໍ່ເນື່ອງ ແລະ ສ້າງມາດຕະຖານການສອນຂອງຄູ, ການອອກໃບຢັ້ງຢືນການສອນ ແລະ ໃບອະນຸຍາດການສອນໃຫ້ແກ່ຄູ ທຸກຂັ້ນ, ທຸກສາຍ ທັງພາກລັດ ແລະ ເອກະຊົນ;

16. ສ້າງ ແລະ ພັດທະນາ ຫຼັກສູດ, ອຸປະກອນ, ສື່ການຮຽນ-ການສອນ ແລະ ສິ່ງອຳນວຍຄວາມສະດວກຕ່າງໆ ເພື່ອຮັບໃຊ້ວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ໃນແຕ່ລະໄລຍະ;

17. ຄົ້ນຄວ້າ, ວິໄຈ ດ້ານວິທະຍາສາດ, ເຕັກໂນໂລຊີ ແລະ ຂໍ້ມູນຂ່າວສານ ການສຶກສາ ແລະ ກິລາ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວ ຂອງການພັດທະນາການສຶກສາ ແລະ ກິລາ ແຫ່ງຊາດ, ພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ;

18. ຊຸກຍູ້, ສົ່ງເສີມ, ຄົ້ນຄວ້າ ແລະ ພັດທະນາຫຼັກສູດ ກ່ຽວກັບວຽກງານການບໍລິຫານ-ຄຸ້ມຄອງ ແລະ ຝຶກອົບຮົມ ໃຫ້ແກ່ຜູ້ບໍລິຫານ ພາຍໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ແລະ ຂະແໜງການອື່ນ ທັງພາກລັດ ແລະ ເອກະຊົນ ພ້ອມທັງ ຕິດຕາມ ແລະ ປະເມີນຜົນ ໃນແຕ່ລະໄລຍະ;

19. ສ້າງ ແລະ ປັບປຸງ ກົງຈັກການຈັດຕັ້ງ, ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ແລະ ກຳນົດຕຳແໜ່ງງານ ຂອງພະນັກງານ-ລັດຖະກອນ ນັບແຕ່ຂັ້ນສູນກາງ ລົງຮອດທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ;

20. ຄຸ້ມຄອງ, ສ້າງແຜນ ບຳລຸງ, ກໍ່ສ້າງ, ບັນຈຸ, ສັບຊ້ອນ, ຕິດຕາມ ແລະ ປະເມີນຜົນງານ ຂອງພະນັກງານ-ລັດຖະກອນ ລວມທັງການສົ່ງເສີມບົດບາດ ຍິງ-ຊາຍ, ການປະຕິບັດນະໂຍບາຍ, ຍ້ອງຍໍ ແລະ ວິໄນຕໍ່ພະນັກງານ-ລັດຖະກອນ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ຕາມລະບຽບການທີ່ກຳນົດໄວ້;

21. ຄຸ້ມຄອງ, ບໍລິຫານການເງິນ, ຊັບສິນ ແລະ ເອກະສານທາງລັດຖະການ ພ້ອມທັງ ຂຶ້ນແຜນງົບປະມານ, ສະຫຼຸບ ແລະ ລາຍງານ ເປັນແຕ່ລະໄລຍະ;

22. ຄຸ້ມຄອງ, ຊຸກຍູ້, ສົ່ງເສີມ, ຢັ້ງຢືນຜົນງານ, ຫົວຄິດປະດິດສ້າງ ແລະ ພອນສະຫວັນ ຂອງນັກຮຽນຮູ້-ປັນຍາຊົນ, ນັກວິທະຍາສາດ ແລະ ນັກຄົ້ນຄວ້າ ທາງດ້ານວິທະຍາສາດ ແລະ ຄວາມປອດໄພດ້ານເຕັກໂນໂລຊີຊີວະພາບ ແລະ ລັງສີ-ນິວເຄຼຍ ຕາມກົດໝາຍ ແລະ ລະບຽບການ. ພ້ອມທັງ ໂຄສະນາເຜີຍແຜ່, ສ້າງຈິດສຳນຶກ ແລະ ສ້າງຄວາມສົນໃຈ ໃຫ້ແກ່ສັງຄົມ ເຫັນໄດ້ເຖິງຄວາມສຳຄັນ ຂອງວຽກງານວິທະຍາສາດ ແລະ ຄວາມປອດໄພດ້ານເຕັກໂນໂລຊີຊີວະພາບ ແລະ ລັງສີ-ນິວເຄຼຍ;

23. ຄຸ້ມຄອງ, ຊຸກຍູ້ ແລະ ສົ່ງເສີມ ການນຳໃຊ້ກອງທຶນຄົ້ນຄວ້າພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ; ສັງລວມ ແລະ ຄັດເລືອກຫົວຂໍ້ການຄົ້ນຄວ້າ ວິທະຍາສາດ ໃນທຸກຂົງເຂດວຽກງານ ທັງພາກລັດ ແລະ ເອກະຊົນ. ພ້ອມທັງ ເປັນຈຸດປະສານງານ ຂອງ ສປປ ລາວ ໃນຂົງເຂດວຽກງານການຄົ້ນຄວ້າວິທະຍາສາດ ກັບພາກພື້ນ ແລະ ສາກົນ;

24. ຄົ້ນຄວ້າ ນະໂຍບາຍ ແລະ ຫຼັກການໃນການນຳໃຊ້ຫຼັກພາສາລາວ, ຄົ້ນຄວ້າ-ວິໄຈ ວິທະຍາສາດ ໃນທຸກຂົງເຂດວຽກງານ ທັງພາກລັດ ແລະ ເອກະຊົນ, ໃຫ້ບໍລິການທາງດ້ານວິຊາການ ແລະ ສະໜອງຂໍ້ມູນຂ່າວສານ ກ່ຽວກັບວຽກງານການສຶກສາ, ວິທະຍາສາດ ແລະ ນະວັດຕະກຳ ແລະ ການກິລາ. ພ້ອມທັງ ຈັດຕັ້ງການຝຶກອົບຮົມ ໃຫ້ແກ່ພະນັກງານ-ລັດຖະກອນ, ນັກຄົ້ນຄວ້າ ແລະ ນັກວິຊາການ ໃຫ້ມີຄວາມຮູ້ ແລະ ຄວາມສາມາດສະເພາະດ້ານ;

25. ພົວພັນ, ຮ່ວມມື, ປະສານງານ ແລະ ແລກປ່ຽນບົດຮຽນ ກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານການສຶກສາ, ວິທະຍາສາດ ແລະ ກິລາ;

26. ຊີ້ນຳ, ຊຸກຍູ້, ຕິດຕາມ, ກວດກາ, ກວດການ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກົດໝາຍ, ນິຕິກຳລຸ່ມກົດໝາຍ, ແຜນຍຸດທະສາດ, ແຜນງານ, ແຜນການ, ໂຄງການ ແລະ ບັນດາກິດຈະກຳ ຂອງກະຊວງສຶກສາທິການ ແລະ ກິລາ ໃນແຕ່ລະໄລຍະ;

27. ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍ ຂອງລັດຖະບານ.

**ມາດຕາ 4 ຂອບເຂດສິດ**

**ກະຊວງສຶກສາທິການ ແລະ ກິລາ ມີສິດ ດັ່ງນີ້:**

1. ສະເໜີລັດຖະບານພິຈາລະນາຮັບຮອງ ນະໂຍບາຍ, ແຜນຍຸດທະສາດ, ດຳລັດ, ໂຄງການ ແລະ ແຜນພັດທະນາ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ;

2. ສະເໜີລັດຖະບານ ພິຈາລະນາຮັບຮອງ ການປັບປຸງກົງຈັກການຈັດຕັ້ງ, ການກຳນົດຕຳແໜ່ງງານ, ການບັນຈຸ, ສັບຊ້ອນ ແລະ ຈັດວາງບຸກຄະລາກອນ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ;

3. ສະເໜີລັດຖະບານ ພິຈາລະນາ ອະນຸມັດ ການຈັດຕັ້ງການແຂ່ງຂັນ ດ້ານການສຶກສາ, ວິທະຍາສາດ ແລະ ກິລາ ລະດັບຊາດ, ພາກພື້ນ ແລະ ສາກົນ;

4. ສະເໜີ ແຜນງົບປະມານ, ສ້າງແຜນລາຍຮັບ-ລາຍຈ່າຍ ແລະ ດັດແກ້ງົບປະມານ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ;

5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ, ພ້ອມທັງສັ່ງໂຈະ, ຍົກເລີກ ແລະ ລົບລ້າງ ນິຕິກຳ ທີ່ຂັດກັບກົດໝາຍ ແລະ ລະບຽບການ;

6. ອະນຸມັດ ແລະ ຮັບຮອງ ຫຼັກສູດການສຶກສາ, ການຄົ້ນຄວ້າວິທະຍາສາດ ແລະ ກິລາ ລະດັບຕ່າງໆ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດ;

7. ຄົ້ນຄວ້າ, ປະກອບຄຳເຫັນ ແລະ ອະນຸມັດ ກ່ຽວກັບການລົງທຶນພາຍໃນ ແລະ ຕ່າງປະເທດ ດ້ານການສຶກສາ, ວິທະຍາສາດ ແລະ ກິລາ ບົນພື້ນຖານກົດໝາຍ, ຂໍ້ກຳນົດ ແລະ ລະບຽບການ ທີ່ລັດຖະບານປະກາດໃຊ້ໃນແຕ່ລະໄລຍະ;

8. ອະນຸມັດຈັດການແຂ່ງຂັນ ດ້ານ ວິທະຍາສາດ, ວິຊາການ, ການຄົ້ນຄວ້າ-ວິໄຈ, ເຕັກໂນໂລຊີ, ນະວັດຕະກຳ ແລະ ອື່ນໆ ກ່ຽວກັບການສຶກສາ, ວິທະຍາສາດ ແລະ ກິລາ ພາຍໃນປະເທດ;

9. ອະນຸມັດ ກົງຈັກການຈັດຕັ້ງ, ກຳນົດພາລະບົດບາດ, ໜ້າທີ່, ຂອບເຂດສິດ ພ້ອມທັງ ບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ພະນັກງານ-ລັດຖະກອນ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ ນັບແຕ່ຂັ້ນສູນກາງ ລົງຮອດທ້ອງຖິ່ນ ຕາມການແບ່ງຂັ້ນຄຸ້ມຄອງ;

10. ອອກໃບອະນຸຍາດ ທາງດ້ານວິຊາການ ໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບວຽກງານວິທະຍາສາດ ແລະ ນະວັດຕະກຳ ຕາມການສະເໜີ ຂອງພາກສ່ວນທີ່ກ່ຽວຂ້ອງ;

11. ອອກໜັງສືຢັ້ງຢືນ, ມອບນາມມະຍົດ, ໃບຍ້ອງຍໍ, ໃບຢັ້ງຢືນການສອນ, ໃບອະນຸຍາດການສອນ ແລະ ໃຫ້ລາງວັນແກ່ ບຸກຄົນ, ນັກວິທະຍາສາດ, ນັກຄົ້ນຄວ້າ ແລະ ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ນະວັດຕະກຳ ຕາມລະບຽບການ ທີ່ກຳນົດ;

12. ຊີ້ນຳ, ຄຸ້ມຄອງຕາມສາຍຕັ້ງ ທາງດ້ານເຕັກນິກ ແລະ ວິຊາການ ໂດຍມີການແບ່ງຂັ້ນຄຸ້ມຄອງ, ແບ່ງຄວາມຮັບຜິດຊອບ ແລະ ສິດຕົກລົງບັນຫາ ໃຫ້ອົງການປົກຄອງທ້ອງຖິ່ນ ຢ່າງລະອຽດ;

13. ຮຽກໂຮມ ພະນັກງານນຳພາ-ຄຸ້ມຄອງ ແລະ ນັກວິຊາການ ຂອງຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ເຂົ້າຮ່ວມປະຊຸມ ຫຼື ລາຍງານສ່ອງແສງວຽກງານເປັນແຕ່ລະໄລຍະ;

14. ອະນຸມັດໃຫ້ ຫ້ອງການ, ບັນດາກົມ, ສະຖາບັນ, ສູນ ຈັດກອງປະຊຸມ ຫຼື ຝຶກອົບຮົມ ຫຼື ສຳມະນາ ທາງວິຊາການ;

15. ຄຸ້ມຄອງ, ຕິດຕາມ ແລະ ກວດກາ ການນຳໃຊ້ງົບປະມານ ໃນຂະແໜງການສຶກສາ, ວິທະຍາສາດ ແລະ ກິລາ ໃຫ້ໄປຕາມກົດໝາຍ ແລະ ລະບຽບການ;

16. ພົວພັນ, ຮ່ວມມື, ເຊັນສັນຍາ, ອະນຸສັນຍາ, ຮັບເອົາການຊ່ວຍເຫຼືອ, ການລົງທຶນຈາກພາຍໃນ ແລະ ຕ່າງປະເທດ ເພື່ອພັດທະນາວຽກງານການສຶກສາ, ວິທະຍາສາດ ແລະ ກິລາ ແລະ ວຽກງານອື່ນ ຕາມການມອບໝາຍ ຫຼື ຕາມການຕົກລົງ ຂອງລັດຖະບານ ບົນພື້ນຖານກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້; ພ້ອມທັງສະໜອງ ດ້ານການຝຶກອົບຮົມ ແລະ ການຄົ້ນຄວ້າວິທະຍາສາດ;

17. ປະຕິບັດສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ, ລະບຽບການ ແລະ ຕາມການມອບໝາຍຂອງລັດຖະບານ.

## ໝວດທີ 3
## ໂຄງປະກອບການຈັດຕັ້ງ

### ມາດຕາ 5 ໂຄງປະກອບກົງຈັກ

ໂຄງປະກອບກົງຈັກ ຂອງກະຊວງສຶກສາທິການ ແລະ ກິລາ ປະກອບດ້ວຍ:

1. ຫ້ອງການ;
2. ກົມຈັດຕັ້ງ;
3. ກົມກວດກາ;
4. ກົມແຜນການ ແລະ ການເງິນ;
5. ກົມຮ່ວມມືກັບຕ່າງປະເທດ;
6. ກົມປະກັນຄຸນນະພາບການສຶກສາ;
7. ກົມການສຶກສາກ່ອນໄວຮຽນ;
8. ກົມສາມັນສຶກສາ;
9. ກົມອາຊີວະສຶກສາ;
10. ກົມການສຶກສາຊັ້ນສູງ;
11. ກົມການສຶກສານອກໂຮງຮຽນ;

12. ກົມພັດທະນາຄູ ແລະ ການບໍລິຫານການສຶກສາ;

13. ກົມກິລາມວນຊົນ, ພະລະ ແລະ ສິລະປະສຶກສາ;

14. ກົມກິລາລະດັບສູງ;

15. ກົມຄຸ້ມຄອງວິທະຍາສາດ;

16. ຫ້ອງການສະພາວິທະຍາສາດແຫ່ງຊາດ.

**ຫົວໜ່ວຍວິຊາການ ລະດັບ 1**

1. ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ;
2. ສະຖາບັນຄົ້ນຄວ້າວິທະຍາສາດ ແລະ ນະວັດຕະກໍາ;
3. ສູນການສຶກສາ ເພື່ອພັດທະນາຊຸມຊົນຂົງເຂດອາຊີຕາເວັນອອກສ່ຽງໃຕ້;
4. ສໍານັກພິມສຶກສາ ແລະ ກິລາ.

ນອກຈາກນີ້ຍັງມີ ມະຫາວິທະຍາໄລ, ສະຖາບັນການສຶກສາ, ວິທະຍາໄລ, ສູນ, ໂຮງຮຽນ, ສະໜາມກິລາ ແລະ ຫົວໜ່ວຍວິສາຫະກິດຈໍານວນໜຶ່ງ ທີ່ຂຶ້ນກັບກະຊວງສຶກສາທິການ ແລະ ກິລາ.

ກະຊວງສຶກສາທິການ ແລະ ກິລາ ມີກົງຈັກການຈັດຕັ້ງດ້ານວິຊາການ ຂອງຕົນ ຢູ່ຂັ້ນທ້ອງຖິ່ນ ຕາມເງື່ອນໄຂຕົວຈິງ ຢູ່ແຕ່ລະຂັ້ນ ຕາມການຕົກລົງ ຂອງອົງການປົກຄອງທ້ອງຖິ່ນ ໂດຍເອກະພາບກັບກະຊວງສຶກສາທິການ ແລະ ກິລາ ແລະ ຄະນະຈັດຕັ້ງສູນກາງພັກ.

**ມາດຕາ 6 ໂຄງປະກອບບຸກຄະລາກອນ**

**ບຸກຄະລາກອນ ຂອງກະຊວງສຶກສາທິການ ແລະ ກິລາ ປະກອບ ມີ:**

1. ລັດຖະມົນຕີກະຊວງ 01 ທ່ານ ຮັບຜິດຊອບຕໍ່ລັດຖະບານ, ນາຍົກລັດຖະມົນຕີ ແລະ ຮອງນາຍົກລັດຖະມົນຕີຜູ້ຊີ້ນໍາວຽກງານຂົງເຂດການປົກຄອງ ແລະ ວັດທະນະທໍາ-ສັງຄົມ ໃນການຄຸ້ມຄອງມະຫາພາກຕາມຂະແໜງການຕົນຮັບຜິດຊອບ ຊຶ່ງມີໜ້າທີ່ ແລະ ສິດຕາມທີ່ກໍານົດໄວ້ໃນກົດໝາຍວ່າດ້ວຍ ລັດຖະບານ;

ໃນເວລາຕິດຂັດ ລັດຖະມົນຕີກະຊວງ ຕ້ອງມອບສິດໃຫ້ຮອງລັດຖະມົນຕີທ່ານໃດໜຶ່ງເປັນຜູ້ຮັກສາການແທນ.

2. ຮອງລັດຖະມົນຕີຈໍານວນໜຶ່ງ ຊ່ວຍລັດຖະມົນຕີກະຊວງ ໃນການຊີ້ນໍາວຽກງານຂອງຕົນ, ຮັບຜິດຊອບວຽກງານໃດໜຶ່ງຕາມການມອບໝາຍຂອງລັດຖະມົນຕີກະຊວງ;

ຮອງລັດຖະມົນຕີເປັນຜູ້ຮັກສາການແທນໃນເວລາລັດຖະມົນຕີກະຊວງຕິດຂັດ;

3. ຫົວໜ້າຫ້ອງການ, ຫົວໜ້າກົມ, ຫົວໜ້າອົງການລັດທຽບເທົ່າກົມ, ຮອງຫົວໜ້າຫ້ອງການ, ຮອງຫົວໜ້າກົມ, ຮອງຫົວໜ້າອົງການລັດທຽບເທົ່າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ, ຫົວໜ້າ, ຮອງຫົວໜ້າອົງການທຽບເທົ່າພະແນກ ແລະ ລັດຖະກອນວິຊາການຈໍານວນໜຶ່ງ ຕາມການກໍານົດຕໍາແໜ່ງງານ.

ການບັນຈຸ, ສັບຊ້ອນ, ແຕ່ງຕັ້ງ, ຍົກຍ້າຍ, ເລື່ອນຊັ້ນ-ເລື່ອນຂັ້ນ, ປະຕິບັດນະໂຍບາຍ ແລະ ວິໄນ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກໍານົດໄວ້.

## ໝວດທີ 4
## ຫຼັກການ ແລະ ແບບແຜນວິທີເຮັດວຽກ

**ມາດຕາ 7 ຫຼັກການ**

ກະຊວງສຶກສາທິການ ແລະ ກິລາ ປະຕິບັດຕາມຫຼັກການ ດັ່ງນີ້:

1. ປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ, ຕົກລົງເປັນໝູ່ຄະນະ ກ່ຽວກັບບັນຫາລວມ ຂອງກະຊວງສຶກສາທິການ ແລະ ກິລາ;

2. ປະຕິບັດລະບອບຫົວໜ້າດຽວ, ແບ່ງງານໃຫ້ບຸກຄົນຮັບຜິດຊອບ ຢ່າງຈະແຈ້ງ ແລະ ເສີມຂະຫຍາຍ ຫົວຄິດປະດິດສ້າງ ຂອງພະນັກງານ-ລັດຖະກອນທຸກລະດັບ;

3. ທຸກການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ແລະ ພະນັກງານ-ລັດຖະກອນ ແມ່ນອີງໃສ່ ກົດໝາຍ, ລະບຽບການ ແລະ ຫຼັກການລວມ ຂອງລັດຖະບານ, ນຳເອົາແນວທາງນະໂຍບາຍ ຂອງພັກ ແລະ ລັດຖະບານ ມາຈັດຕັ້ງຜັນຂະຫຍາຍໃຫ້ໄດ້ຮັບຜົນດີ.

**ມາດຕາ 8 ແບບແຜນວິທີເຮັດວຽກ**

ກະຊວງສຶກສາທິການ ແລະ ກິລາ ມີແບບແຜນວິທີເຮັດວຽກ ດັ່ງນີ້:

1. ເຮັດວຽກມີ ແຜນການ, ແຜນງານ ແລະ ໂຄງການລະອຽດ ແກ້ໄຂວຽກງານຢ່າງມີຈຸດສຸມ ແລະ ມີເປົ້າໝາຍໃນແຕ່ລະໄລຍະ, ປະສານສົມທົບຢ່າງແໜ້ນແຟ້ນກັບຂະແໜງການອື່ນ ແລະ ອົງການປົກຄອງ ທ້ອງຖິ່ນ ແນ່ໃສ່ໜູນໃຊ້ກຳລັງແຮງ ຂອງທຸກພາກສ່ວນ ເພື່ອພັດທະນາວຽກງານການສຶກສາ, ວິທະຍາສາດ ແລະ ກິລາ;

2. ເຮັດວຽກມີການ ກວດກາ, ຕິດຕາມ, ຊຸກຍູ້, ສະຫຼຸບຖອດຖອນບົດຮຽນ, ຕີລາຄາຜົນໄດ້ຮັບ-ຜົນເສຍ ພ້ອມທັງລາຍງານສ່ອງແສງຢ່າງເຂັ້ມງວດ;

3. ປະຕິບັດ ລະບອບປະຊຸມປະຈຳເດືອນ, 3 ເດືອນ, 6 ເດືອນ, ປະຈຳປີ ຫຼື ກອງປະຊຸມວິຊາການ ແລະ ປະຕິບັດລະບອບລາຍງານໃຫ້ລັດຖະບານ ແລະ ນາຍົກລັດຖະມົນຕີ ເປັນປົກກະຕິ;

4. ປະຕິບັດການພົວພັນປະສານງານ ພາຍໃນ ແລະ ພາຍນອກ ໃຫ້ສອດຄ່ອງ ຕາມລະບຽບຫຼັກການ.

## ໝວດທີ 5
## ບົດບັນຍັດສຸດທ້າຍ

**ມາດຕາ 9 ງົບປະມານ ແລະ ຕາປະທັບ**

ກະຊວງສຶກສາທິການ ແລະ ກິລາ ມີງົບປະມານ ແລະ ຕາປະທັບ ເພື່ອຮັບໃຊ້ໃນການເຄື່ອນໄຫວວຽກ ງານທາງລັດຖະການ ຕາມກົດໝາຍ ແລະ ລະບຽບການ ທີ່ກຳນົດໄວ້.

**ມາດຕາ 10 ການຜັນຂະຫຍາຍ**

ມອບໃຫ້ລັດຖະມົນຕີ ກະຊວງສຶກສາທິການ ແລະ ກິລາ ເປັນຜູ້ອອກຂໍ້ຕົກລົງວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ, ບັນດາກົມ, ອົງການລັດທຽບເທົ່າກົມ, ສະຖາບັນ, ວິທະຍາໄລ, ສູນ, ໂຮງຮຽນ, ສະໜາມກິລາ, ສຳນັກພິມສຶກສາ ແລະ ກິລາ ແລະ ກົງຈັກການຈັດຕັ້ງ ຂອງທ້ອງຖິ່ນ ທີ່ຢູ່ພາຍໃຕ້ ການຊີ້ນຳທາງດ້ານວິຊາການ ທີ່ລະບຸໄວ້ໃນມາດຕາ 5 ຂອງດຳລັດສະບັບນີ້ ບົນພື້ນຖານການແບ່ງຂັ້ນຄຸ້ມຄອງ,

ມອບຄວາມຮັບຜິດຊອບຢ່າງຈະແຈ້ງ, ຮັດກຸມ ແລະ ເໝາະສົມ ເພື່ອຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານ ໃຫ້ໄດ້ຮັບຜົນດີ.

**ມາດຕາ 11 ການຈັດຕັ້ງປະຕິບັດ**

ກະຊວງສຶກສາທິການ ແລະ ກິລາ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ບັນດາກະຊວງ, ອົງການທຽບເທົ່າກະຊວງ, ແຂວງ, ນະຄອນຫຼວງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 12 ຜົນສັກສິດ**

ດຳລັດສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021.

**ນາຍົກລັດຖະມົນຕີ**

ສອນໄຊ ສີພັນດອນ